ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມນະໂຍບາຍເງິນຕາ

ເລກທີ 522 /ກນງ

ນະຄອນຫຼວງວຽງຈັນ, ວັນທີ 4 ກໍລະກົດ 2016

# ແຈ້ງການ

**ເຖິງ:** ບັນດາຮ້ານແລກປ່ຽນເງິນຕາ ໃນຂອບເຂດທົ່ວປະເທດ

**ເລື່ອງ:** ການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016;
- ອີງຕາມແຈ້ງການກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ກັບມວນຊົນ ສະບັບເລກທີ 202/ທຫລ, ລົງວັນທີ 01 ກໍລະກົດ 2016.

ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ, ຂໍຖືເປັນກຽດແຈ້ງມາຍັງທ່ານ ຊາບວ່າ: ການດຳເນີນທຸລະກິດແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດ ໃຫ້ດຳເນີນເຄື່ອນໄຫວຕາມຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016 ປ່ຽນແທນ ກົດລະບຽບຄຸ້ມຄອງຮ້ານແລກປ່ຽນເງິນຕາ ສະບັບເລກທີ 05/ທຫລ, ລົງວັນທີ 16 ພະຈິກ 2011.

ສະນັ້ນ, ເພື່ອຈັດຕັ້ງປະຕິບັດໃຫ້ສອດຄ່ອງຕາມຂໍ້ຕົກລົງສະບັບດັ່ງກ່າວ ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ, ຈຶ່ງແຈ້ງມາຍັງບັນດາຮ້ານແລກປ່ຽນເງິນຕາ ປະຕິບັດດັ່ງນີ້:

1. ຮ້ານແລກປ່ຽນເງິນຕາທີ່ໄດ້ຮັບອະນຸຍາດໃນໄລຍະຜ່ານມາ ຕ້ອງມາເພີ່ມທຶນຈົດທະບຽນໃຫ້ຄົບຖ້ວນຕາມມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016 ພາຍໃນປີ 2016;

2. ຮ້ານແລກປ່ຽນເງິນຕາໃນນະຄອນຫຼວງວຽງຈັນ ຕ້ອງຕິດຕັ້ງລະບົບລາຍງານການຊື້-ຂາຍເງິນຕາຄົບຊຸດ ໃຫ້ສຳເລັດພາຍໃນປີ 2016, ພ້ອມທັງ ຮັບຜິດຊອບຄ່າໃຊ້ຈ່າຍທີ່ຕິດພັນທັງໝົດ. ສຳລັບຮ້ານແລກປ່ຽນເງິນຕາຢູ່ຕ່າງແຂວງໃຫ້ປະຕິບັດລະບົບການລາຍງານທາງໂທລະສານ (ແຟັກ) ຫຼື ຈົດໝາຍເອເລັກໂຕນິກ (ອີເມວ) ຕາມແບບຟອມ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດອອກ;
3. ສາຂາຂອງຮ້ານແລກປ່ຽນເງິນຕາ ທີ່ໄດ້ຮັບອະນຸຍາດໃນໄລຍະຜ່ານມາຕ້ອງມາຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາເຕັມຮູບແບບຕາມລະບຽບການທີ່ກຳນົດໄວ້;
4. ຮ້ານແລກປ່ຽນເງິນຕາໃນຂອບເຂດທົ່ວປະເທດ ຕ້ອງປະຕິບັດຕາມຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016, ແຈ້ງການກ່ຽວກັບການຊື້-ຂາຍເງິນຕາຕ່າງປະເທດ ກັບມອນຊີນ ສະບັບເລກທີ 202/ທຫລ, ລົງວັນທີ 01 ກໍລະກົດ 2016 ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

**ຫົວໜ້າກົມນະໂຍບາຍເງິນຕາ**

ທະນາຄານ ແຫ່ງ ສປປ ລາວ
ກົມນະໂຍບາຍເງິນຕາ

**ຄຳພຸດ ສິດທິລາດ**